ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

005----

ແຂວງບໍລິຄຳໄຊ

ເລກທີ______/ຂບຊ

ບໍລິຄຳໄຊ, ວັນທີ 26 MAR 2014

# ຄຳສັ່ງແນະນຳ
# ຂອງເຈົ້າແຂວງ-ແຂວງບໍລິຄຳໄຊ

**ເຖິງ: ທ່ານເຈົ້າເມືອງ 07 ເມືອງ, ຫົວໜ້າພະແນກການ, ກົມກອງ, ອົງການຈັດຕັ້ງມະຫາຊົນທ້ອງການ, ລັດວິສາຫະກິດ ແລະ ບໍລິສັດພາຍໃນແຂວງ.**

**ເລື່ອງ: ການຈັດຕັ້ງຜັນຂະຫຍາຍດຳລັດ, ມະຕິຕົກລົງ ແລະ ຄຳສັ່ງແນະນຳ ຂອງສູນກາງ ກ່ຽວກັບການຈັດຕັ້ງກວດກາການ ເຂົ້າ-ອອກເມືອງ, ການຄຸ້ມຄອງຄົນລາວ ແລະ ຄົນຕ່າງປະເທດ ຢູ່ແຂວງບໍລິຄຳໄຊ.**

- ອີງຕາມ ດຳລັດຂອງນາຍົກລັດຖະມົນຕີ ສະບັບເລກທີ 136/ນຍ, ລົງວັນທີ 25 ພຶດສະພາ 2009 ວ່າດ້ວຍການຄຸ້ມຄອງການເຂົ້າ-ອອກ ສປປ ລາວ ແລະ ການຄຸ້ມຄອງຄົນຕ່າງປະເທດ.
- ອີງຕາມ ມະຕິຕົກລົງຂອງລັດຖະບານ ສະບັບເລກທີ 03/ລບ, ລົງວັນທີ 16 ມີນາ 2011 ກ່ຽວກັບທິດທາງ ແລະ ວິທີການແກ້ໄຂບັນຫາຊາວຕ່າງປະເທດ ທີ່ເຂົ້າມາທຳມາຫາກິນດ້ວຍການຄ້າຂາຍ ແລະ ຮັບຈ້າງຢູ່ ສປປ ລາວ.
- ອີງຕາມ ຄຳສັ່ງແນະນຳຂອງ ລັດຖະມົນຕີວ່າການກະຊວງປ້ອງກັນຄວາມສະຫງົບ ສະບັບເລກທີ 573/ປກສ, ລົງວັນທີ 07 ກໍລະກົດ 2008 ວ່າດ້ວຍການຜັນຂະຫຍາຍເນື້ອໃນກອງປະຊຸມ ວຽກງານກວດຄົນເຂົ້າ-ອອກເມືອງ ແລະ ຄຸ້ມຄອງຄົນຕ່າງປະເທດ ທົ່ວປະເທດ.

## ເຈົ້າແຂວງ-ແຂວງບໍລິຄຳໄຊ ອອກຄຳສັ່ງແນະນຳດັ່ງນີ້:

I. ລະບຽບຫຼັກການລວມ ການເຂົ້າ-ອອກ ສປປ ລາວ ຂອງພົນລະເມືອງລາວ ແລະ ຊາວຕ່າງປະເທດ ຕ້ອງປະຕິບັດຕາມຫຼັກການດັ່ງນີ້:

1. ພົນລະເມືອງລາວທຸກຄົນທີ່ຈະເດີນທາງໄປຕ່າງປະເທດ ຕ້ອງມີເອກະສານເດີນທາງທີ່ຖືກຕ້ອງຕາມລະບຽບຫຼັກການຄື: ໜັງສືຜ່ານແດນ, ປຶ້ມຜ່ານແດນ ຫຼື ໃບຜ່ານແດນ.
2. ພົນລະເມືອງລາວທີ່ຖືໜັງສືຜ່ານແດນການທູດ ຫຼື ລັດຖະບານ ບໍ່ຈຳເປັນເອົາວິຊາເພື່ອແຈ້ງອອກ ຈາກກົມກົງສຸນ ກະຊວງການຕ່າງປະເທດອີກ (ເລີ່ມແຕ່ 01 ຕຸລາ 2013).
   - ກໍລະນີເດີນທາງໄປປະເທດ ທີ່ຍັງບໍ່ທັນໄດ້ຍົກເວັ້ນວິຊາການທູດ ແລະ ລັດຖະບານ ຕ້ອງໄດ້ໄປເອົາຈົດໝາຍທາງການ ຈາກກົມກົງສຸນ ກະຊວງການຕ່າງປະເທດ ຄືເຄີຍປະຕິບັດຜ່ານມາ ໂດຍມີເອກະສານຢັ້ງຢືນແຕ່ງຕັ້ງ ຈາກອົງການຈັດຕັ້ງຂອງຕົນ ຈຶ່ງສາມາດແຈ້ງອອກໄດ້.

3. ຄົນຕ່າງປະເທດ ແລະ ຄົນບໍ່ມີສັນຊາດທີ່ຈະເຂົ້າມາ ສປປ ລາວ ຕ້ອງມີໜັງສືຜ່ານແດນ ຫຼື ເອກະສານເດີນທາງໃຊ້ແທນໜັງສືຜ່ານແດນ, ປຶ້ມຜ່ານແດນ ຫຼື ໃບຜ່ານແດນ ທີ່ຖືກຕ້ອງຈຶ່ງສາມາດເດີນທາງເຂົ້າ-ອອກໄດ້ ຕາມດ່ານເຂົ້າ-ອອກປະເທດ ທີ່ທາງການກຳນົດໄວ້.
   - ສຳລັບໜັງສືຜ່ານແດນ (Passport) ຕ້ອງມີອາຍຸການນຳໃຊ້ແຕ່ 6 ເດືອນຂຶ້ນໄປ ຈຶ່ງສາມາດເດີນທາງເຂົ້າ ສປປ ລາວ ໄດ້.
4. ຄົນຕ່າງປະເທດ ແລະ ຄົນບໍ່ມີສັນຊາດ ທີ່ບໍ່ໄດ້ຮັບອະນຸຍາດເຂົ້າ ສປປ ລາວ ມີດັ່ງນີ້:
   - ບຸກຄົນທີ່ພົວພັນເຖິງການລ່ວງລະເມີດຕໍ່ຄວາມໝັ້ນຄົງ, ຄວາມສະຫງົບ ແລະ ຜົນປະໂຫຍດລວມຂອງ ສປປ ລາວ.
   - ບຸກຄົນທີ່ພົວພັນເຖິງການໂຈລະກຳລະຫວ່າງຊາດ, ການກໍ່ອາຊະຍາກຳຂ້າມຊາດ, ການຄ້າມະນຸດ.
   - ບຸກຄົນທີ່ຖືໜັງສືຜ່ານແດນ, ປຶ້ມຜ່ານແດນ ຫຼື ໃບຜ່ານແດນ (ຖືກປອມແປງ ຫຼື ໝົດອາຍຸ).
   - ຜູ້ທີ່ມີຖານະທາງດ້ານການເງິນພຽງພໍ ສຳລັບໄລຍະເວລາທີ່ຜູ້ກ່ຽວພັກເຊົາຢູ່ ສປປ ລາວ.
   - ບຸກຄົນທີ່ບໍ່ເພິ່ງປາຖະໜາ, ພະຍາດຕິດແປດ ແລະ ບໍ່ມີເງື່ອນໄຂຄົບຖ້ວນ.
5. ພົນລະເມືອງລາວ, ຄົນຕ່າງດ້າວ, ຄົນຕ່າງປະເທດ ແລະ ຄົນບໍ່ມີສັນຊາດ ທີ່ບໍ່ອະນຸຍາດໃຫ້ເດີນທາງອອກ ສປປ ລາວ ຊົ່ວຄາວ ມີດັ່ງນີ້:
   - ບຸກຄົນທີ່ພົວພັນເຖິງການລ່ວງລະເມີດຕໍ່ຄວາມໝັ້ນຄົງ, ຄວາມສະຫງົບ ແລະ ຜົນປະໂຫຍດລວມຂອງຊາດ ຫຼື ບຸກຄົນທີ່ເຮັດໃຫ້ເສື່ອມເສຍ, ເສຍກຽດ ແລະ ສັກສີຂອງຊາດລາວ.
   - ບຸກຄົນທີ່ຖືໜັງສືຜ່ານແດນ, ປຶ້ມຜ່ານແດນ ຫຼື ໃບຜ່ານແດນ (ຖືກປອມແປງ ຫຼື ໝົດອາຍຸ).
   - ບຸກຄົນທີ່ພົວພັນກັບຄະດີແພ່ງ ຫຼື ຄະດີອາຍາ ເຊິ່ງຢູ່ໃນຂັ້ນຕອນຂອງການດຳເນີນຄະດີຢູ່ນັ້ນ ຈະບໍ່ອະນຸຍາດໃຫ້ເດີນທາງອອກ ສປປ ລາວ ຊົ່ວຄາວ ຕາມການສະເໜີຂອງອົງການສືບສວນ-ສອບສວນ, ອົງການໄອຍະການ, ສານປະຊາຊົນ ຫຼື ພາກສ່ວນທີ່ມີສິດກ່ຽວຂ້ອງ.
6. ພົນລະເມືອງລາວທີ່ນຳໃຊ້ໜັງສືຜ່ານແດນ ເພື່ອເດີນທາງໄປຕ່າງປະເທດ ທີ່ບໍ່ໄດ້ຍົກເວັ້ນວີຊ່າ ຕ້ອງມີວີຊ່າແຈ້ງເຂົ້າປະເທດທີ່ຈະໄປນັ້ນ. ສຳລັບປະເທດທີ່ມີສັນຍາຍົກເວັ້ນວີຊ່າກັບ ສປປ ລາວ ແມ່ນໃຫ້ປະຕິບັດຕາມສັນຍາ ທີ່ສອງຝ່າຍໄດ້ຕົກລົງກັນ.
7. ພົນລະເມືອງຂອງປະເທດໃກ້ຄຽງ ທີ່ຖືໜັງສືຜ່ານແດນ, ປຶ້ມຜ່ານແດນ ຫຼື ໃບຜ່ານແດນ ເດີນທາງເຂົ້າ ສປປ ລາວ ໃຫ້ປະຕິບັດຕາມສັນຍາສອງຝ່າຍ.
8. ຄົນຕ່າງປະເທດຜູ້ທີ່ຖືປຶ້ມຜ່ານແດນ, ໃບຜ່ານແດນ ເດີນທາງເຂົ້າມາ ສປປ ລາວ ຫາກມີຈຸດປະສົງຢູ່ເກີນກຳນົດໄລຍະພັກເຊົາທີ່ດ່ານກຳນົດໃຫ້ ຕ້ອງໄດ້ສະເໜີຂໍຕໍ່ກຳນົດພັກເຊົາຢູ່ ພະແນກຕຳຫຼວດ ຕ.ມ ກອງບັນຊາການ ປກສ ແຂວງ ກ່ອນຈະໝົດກຳນົດ 1 ວັນ.
9. ຊ່ຽວຊານ, ນັກລົງທຶນ, ນັກທຸລະກິດຕ່າງປະເທດ ທີ່ມີໂຄງການລົງທຶນຢູ່ບັນດາແຂວງ ທີ່ມີດ່ານທ້ອງຖິ່ນກໍ່ສາມາດເຂົ້າ-ອອກ ຜ່ານດ່ານທ້ອງຖິ່ນໄດ້, ແຕ່ຕ້ອງເຮັດໜັງສືສະເໜີຂໍອະນຸຍາດ ຜ່ານກະຊວງການຕ່າງປະເທດ ແລະ ກະຊວງ ປກສ ເຖິງດ່ານກວດກາຄົນເຂົ້າ-ອອກເມືອງ ເພື່ອອຳນວຍຄວາມສະດວກ ໃນການເຂົ້າ-ອອກ ແຕ່ລະຄັ້ງ.
10. ຄົນຕ່າງປະເທດ ແລະ ຄົນບໍ່ມີສັນຊາດ ທີ່ເຂົ້າມາ ສປປ ລາວ ຕ້ອງເຄົາລົບລະບຽບກົດໝາຍ, ຮີດຄອງປະເພນີ ແລະ ວັດທະນະທຳຂອງ ສປປ ລາວ.
11. ຄົນຕ່າງປະເທດ ແລະ ຄົນບໍ່ມີສັນຊາດ ທີ່ເຂົ້າມາ ສປປ ລາວ ໂດຍໃຊ້ໜັງສືຜ່ານແດນ ຫຼື (Passport) ແມ່ນສາມາດເດີນທາງໄປທຸກໆແຂວງ ໃນຂອບເຂດທົ່ວປະເທດ, ຍົກເວັ້ນເຂດຫວງຫ້າມ, ສຳລັບປຶ້ມຜ່ານແດນ ຫຼື ໃບຜ່ານແດນ ແມ່ນໄປໄດ້ໃນຂອບເຂດແຂວງ ຫຼື ເມືອງທີ່ມີຊາຍແດນຕິດຈອດກັນ ຫຼື ຕາມຂໍ້ຕົກລົງ, ສັນຍາລະຫວ່າງປະເທດ.

12. ຄົນຕ່າງປະເທດ, ຄົນບໍ່ມີສັນຊາດ ທີ່ເຂົ້າມາລາວໄລຍະສັ້ນ ແລະ ຊົ່ວຄາວ ຈະບໍ່ໄດ້ຮັບອະນຸຍາດໃຫ້ດໍາເນີນທຸລະກິດ ຫຼື ປະກອບອາຊີບຕ່າງໆ ເພື່ອຫາລາຍໄດ້.
13. ການນໍາເຂົ້າ ຫຼື ການໃຊ້ແຮງງານຕ່າງປະເທດ ຕ້ອງປະຕິບັດຕາມເງື່ອນໄຂ ແລະ ລະບຽບຂອງ ກະຊວງແຮງງານ ແລະ ສະຫວັດດີການ-ສັງຄົມ ວາງອອກ.
14. ເມື່ອຄົນຕ່າງປະເທດເຂົ້າມາພັກເຊົາ ແລະ ເຄື່ອນໄຫວຢູ່ທ້ອງຖິ່ນໃດ ຕ້ອງແຈ້ງພັກເຊົານໍາທ້ອງຖິ່ນນັ້ນເຊັ່ນ: ປກສ ເມືອງ, ປກສ ກຸ່ມບ້ານ ພາຍໃນ 24 ຊົ່ວໂມງ, ຖ້າພັກເຊົາຢູ່ເທດສະບານແຂວງ ແມ່ນແຈ້ງພັກເຊົານໍາເຈົ້າໜ້າທີ່ ຄ.ຕ.ທ ແຂວງ, ໃນກໍລະນີຄົນຕ່າງປະເທດ ບໍ່ສາມາດມາແຈ້ງພັກເຊົາດ້ວຍຕົນເອງ ກໍ່ອະນຸຍາດໃຫ້ເຈົ້າຂອງໂຄງການ ຫຼື ຍາດພີ່ນ້ອງ ນໍາເອົາເອກະສານຜ່ານແດນ ມາແຈ້ງຕໍ່ເຈົ້າໜ້າທີ່ກໍ່ໄດ້.
15. ຄົນຕ່າງປະເທດ, ຄົນບໍ່ມີສັນຊາດ ເຂົ້າມາອອກແຮງງານ ຫຼື ເຮັດວຽກຢູ່ຫົວໜ່ວຍແຮງງານໃນແຂວງ ແມ່ນຕ້ອງໄດ້ຮັບອະນຸຍາດຈາກ ພະແນກແຮງງານ ແລະ ສະຫວັດດີການ-ສັງຄົມແຂວງ.

II. <u>ບັນດາຂໍ້ຫ້າມຕ່າງໆ ພາຍໃນແຂວງ</u>.

1. ຫ້າມຄົນຕ່າງປະເທດ ແລະ ຄົນບໍ່ມີສັນຊາດ ທີ່ເຂົ້າມາ ສປປ ລາວ ໄລຍະສັ້ນ ແລະ ຊົ່ວຄາວ ດໍາເນີນທຸລະກິດ ຫຼື ປະກອບອາຊີບຕ່າງໆ ເພື່ອຫາລາຍໄດ້ຢູ່ ແຂວງບໍລິຄໍາໄຊ.
2. ຫ້າມຄົນຕ່າງປະເທດ ແລະ ຄົນບໍ່ມີສັນຊາດ ທີ່ນໍາໃຊ້ເອກະສານຜ່ານແດນທຸກປະເພດ ເຂົ້າໄປໃນເຂດຫວງຫ້າມ ແລະ ເຄື່ອນໄຫວກາຍຂອບເຂດ ທີ່ແຂວງບໍລິຄໍາໄຊ ໄດ້ກໍານົດ.
3. ຫ້າມຄົນຕ່າງປະເທດ ແລະ ຄົນບໍ່ມີສັນຊາດ ທີ່ເຂົ້າມາ ສປປ ລາວ ເຄື່ອນໄຫວຜິດຕໍ່ລະບຽບກົດໝາຍ, ຮີດຄອງປະເພນີ ແລະ ວັດທະນະທໍາອັນດີງາມຂອງເຜົ່າຕ່າງໆພາຍໃນແຂວງບໍລິຄໍາໄຊ ແລະ ສປປ ລາວ.
4. ຫ້າມຄົນຕ່າງປະເທດ ແລະ ຄົນບໍ່ມີສັນຊາດ ເຂົ້າມາຕັ້ງຖິ່ນຖານ ຫຼື ລີ້ຊ່ອນຢູ່ແຕ່ລະບ້ານ ແລະ ແຕ່ລະເມືອງຂອງແຂວງບໍລິຄໍາໄຊ ຕາມລໍາພັງໃຈຢ່າງເດັດຂາດ.
5. ຫ້າມທຸກໆພາກສ່ວນທີ່ກ່ຽວຂ້ອງເຊັ່ນ: ປກສ ບ້ານ, ນາຍບ້ານ, ປກສ ເຂດ, ປກສ ເມືອງ ຈໍ້າກາ ຫຼື ຂີດຂຽນໃສ່ໜັງສືຜ່ານແດນ, ປຶ້ມຜ່ານແດນ ຂອງຄົນຕ່າງປະເທດຢ່າງເດັດຂາດ.
6. ຫ້າມບໍ່ໃຫ້ເຈົ້າໜ້າທີ່ທ້ອງຖິ່ນຂຶ້ນທະບຽນສໍາມະໂນຄົວ ແລະ ອອກບັດປະຈໍາຕົວ ໃຫ້ຊາວຕ່າງປະເທດແບບຊະຊາຍ ໂດຍບໍ່ໄດ້ຮັບອະນຸຍາດຈາກຂັ້ນເທິງ.
7. ຫ້າມພະນັກງານລັດຖະກອນ ລວມທັງລູກ-ເມຍ ວິ່ງເຕັ້ນເປັນນາຍໜ້າ ແລ່ນເຮັດໜັງສື ເອກະສານຕ່າງໆ ໃຫ້ຄົນລາວ ແລະ ຄົນຕ່າງປະເທດຢ່າງເດັດຂາດ.
8. ຫ້າມຊຸກເຊື່ອງ, ປິດບັງ ຄົນຕ່າງປະເທດຢູ່ໃນເຮືອນ, ບໍລິສັດ, ສໍານັກງານ-ອົງການຂອງຕົນ.
9. ຫ້າມນໍາເຂົ້າ ແລະ ຂຶ້ນທະບຽນ ອອກບັດອະນຸຍາດເຮັດວຽກ ໃຫ້ແຮງງານຕ່າງປະເທດໂດຍບໍ່ໄດ້ຮັບອະນຸຍາດຈາກກົມພັດທະນາສີມືແຮງງານ ແລະ ຈັດຫາງານ ຫຼື ພະແນກແຮງງານ ແລະ ສະຫວັດດີການ-ສັງຄົມແຂວງ.
10. ຫ້າມອອກບັດອະນຸຍາດເຮັດວຽກໃຫ້ແຮງງານຕ່າງປະເທດ ທີ່ເຂົ້າມາແຂວງໃນນາມນັກທ່ອງທ່ຽວ, ມາຢ້ຽມຢາມທີ່ບໍ່ມີວີຊ່າເຂົ້າລາວ.
11. ຫ້າມຄົນຕ່າງປະເທດ ເຂົ້າມາເຮັດວຽກໃນຂົງເຂດອາຊີບທີ່ສະຫງວນໄວ້ໃຫ້ພົນລະເມືອງລາວຢ່າງເດັດຂາດ ແລະ ຫ້າມເຮັດວຽກບໍ່ຖືກກັບສະຖານທີ່ ທີ່ທາງການອະນຸຍາດ.
12. ຫ້າມບໍ່ໃຫ້ເອົາໃບຮັບຮອງຂອງວິສາຫະກິດມອບໃຫ້, ໂອນໃຫ້ບຸກຄົນ ຫຼື ນິຕິບຸກຄົນອື່ນນໍາໃຊ້, ຫ້າມຄົນລາວເອົາໃບປະຕັງຂອງຕົນ ໃຫ້ຄົນຕ່າງປະເທດຢືມ ຫຼື ຊື້-ຂາຍຢ່າງເດັດຂາດ. ໝາຍຄວາມວ່າຫ້າມເຈົ້າໜ້າທີ່ກ່ຽວຂ້ອງທຸກພາກສ່ວນ ເອົາເອກະສານຕ່າງໆທີ່ເປັນເງື່ອນໄຂ ແລະ ເປັນບ່ອນອີງໃຫ້ຄົນຕ່າງປະເທດດໍາເນີນທຸລະກິດຄ້າຂາຍ ແລະ ອາໃສຢູ່ລາວ ໂດຍບໍ່ຖືກຕ້ອງຕາມລະບຽບ.

III. ບາງມາດຕະການຕໍ່ຜູ້ລະເມີດ.

ສໍາລັບຄົນລາວ, ຊາວຕ່າງປະເທດ ແລະ ຄົນບໍ່ມີສັນຊາດ ທີ່ລະເມີດຄໍາສັ່ງແນະນໍາສະບັບນີ້ ຈະຖືກປະຕິບັດມາດຕະການດັ່ງລຸ່ມນີ້:

1. ຄົນຕ່າງປະເທດ ລັກລອບເຂົ້າເມືອງຜິດກົດໝາຍ ປັບໃໝ 100-500 ໂດລາ/ຄົນ/ຄັ້ງ, ແລ້ວຈັດສົ່ງກັບຄືນປະເທດຕາມຂັ້ນຕອນ.
   - ຄົນຕ່າງປະເທດ ເດີນທາງເຂົ້າ ສປປ ລາວ ໂດຍຜ່ານດ່ານແຕ່ບໍ່ຜ່ານການກວດກາແຈ້ງເຂົ້າ-ອອກ (ບໍ່ປະທັບຕາອະນຸຍາດເຂົ້າ-ອອກ) ຂອງເຈົ້າໜ້າທີ່ ທີ່ມີສິດປະຈໍາດ່ານ ຈະຖືກສຶກສາອົບຮົມ ຫຼື ກ່າວເຕືອນ, ໃນກໍລະນີລະເມີດເປັນຄັ້ງທີ 2 ຈະຖືກປັບໃໝ 100 ໂດລາ/ຄົນ.
2. ຢູ່ເກີນກໍານົດອະນຸຍາດ ປັບໃໝ 10 ໂດລາ/ວັນ ສໍາລັບຜູ້ຖືໜັງສືຜ່ານແດນ (Passport), ປັບໃໝ 5 ໂດລາ/ວັນ ສໍາລັບຜູ້ຖືປຶ້ມຜ່ານແດນ (boderpass) ແລະ ໃບຜ່ານແດນຊົ່ວຄາວ ແລະ ແນະນໍາໃຫ້ອອກຈາກ ສປປ ລາວ ພາຍໃນ 3-7 ວັນ ຫຼື ຈັດສົ່ງກັບປະເທດຕາມຂັ້ນຕອນ.
3. ລັກລີ້ຊ່ອນຢູ່ລາວເກີນ 3 ເດືອນຂຶ້ນໄປ ຈະຖືກປັບໃໝແຕ່ 300-2.000 ໂດລາ/ຄົນ.
4. ລັກລອບໄປກາຍຂອບເຂດອະນຸຍາດ ຈະຖືກປັບໃໝ 100 ໂດລາ/ຄົນ/ຄັ້ງ.
5. ລັກແຕ່ງງານກັບພົນລະເມືອງລາວ ຈະຖືກປັບໃໝ 500 ໂດລາ/ຄັ້ງ ທີ່ລະເມີດ ແລະ ຈັດສົ່ງກັບຄືນປະເທດເດີມ ແລ້ວແນະນໍາໃຫ້ປະກອບເອກະສານແຕ່ງງານ ຖືກຕ້ອງຕາມລະບຽບ.
   - ສໍາລັບຄົນລາວແມ່ນ ປັບໃໝ 500.000 ກີບ-1.000.000 ກີບ/ຄັ້ງ ທີ່ລະເມີດ.
6. ພົນລະເມືອງລາວລັກເຂົ້າ-ອອກເມືອງ ຜິດກົດໝາຍ ຈະຖືກສຶກສາອົບຮົມ ກ່າວເຕືອນ, ປັບໃໝ 500.000 ກີບ-1.000.000 ກີບ/ຄັ້ງ/ຄົນ, ໃຫ້ຍາດພີ່ນ້ອງ ແລະ ອໍານາດການປົກຄອງມາຮັບປະກັນເອົາ.
   - ພົນລະເມືອງລາວທີ່ໃຊ້ຍານພາຫະນະເຊັ່ນ: ລົດ, ເຮືອ ອໍານວຍຄວາມສະດວກ ຫຼື ຮັບຈ້າງໂດຍສານ, ຂົນສົ່ງຄົນ, ສິນຄ້າຂ້າມແດນຜິດກົດໝາຍ ຈະໄດ້ປະຕິບັດດັ່ງນີ້:

   + ຄັ້ງທີ່ 1: ສຶກສາອົບຮົມກ່າວເຕືອນ ປັບໃໝ 500.000 ກີບ-1.000.000 ກີບ.
   + ຄັ້ງທີ 2: ສຶກສາອົບຮົມກ່າວເຕືອນ ປັບໃໝ 1.000.000 ກີບ-2.000.000 ກີບ, ພ້ອມທັງກັກພາຫະນະ ໄປໄວ້ຢູ່ດ່ານເຂົ້າ-ອອກ ຫຼື ປກສ ເມືອງ ກໍານົດ 6 ເດືອນ.
   + ຄັ້ງທີ 3: ປັບໃໝ 3.000.000 ກີບ, ພ້ອມທັງກັກຕົວມາດໍາເນີນຄະດີ, ສ່ວນພາຫະນະຈະຖືກຢຶດເຂົ້າເປັນຂອງລັດ.
7. ພົນລະເມືອງລາວ ທີ່ເດີນທາງກັບມາຈາກຕ່າງປະເທດ ທີ່ຖືໃບເດີນທາງໃຊ້ຕາງໜັງສືຜ່ານແດນ (Laissez-passer) ອອກໃຫ້ໂດຍສະຖານກົງສຸນ ຫຼື ສະຖານທູດລາວ ປະຈໍາຢູ່ຕ່າງປະເທດ ໄດ້ມາແຈ້ງເຂົ້ານໍາເຈົ້າໜ້າທີ່ປະຈໍາດ່ານເຂົ້າ-ອອກເມືອງ ແມ່ນໃຫ້ປະຕິບັດຕາມແຈ້ງການຂອງ ຄະນະເລຂາທິການລັດຖະບານ ເລກທີ 1613/ລບ, ລົງວັນທີ 03/10/2007 ບໍ່ໃຫ້ເຈົ້າໜ້າທີ່, ອໍານາດການປົກຄອງທ້ອງຖິ່ນປັບໃໝ ຫຼື ເກັບເງິນນໍາພໍ່ແມ່ ຍາດຕິພີ່ນ້ອງ ຂອງເຂົາເຈົ້າຢ່າງເດັດຂາດ ເພາະໄດ້ຜ່ານການພິສູດສັນຊາດຢູ່ຕ່າງປະເທດມາແລ້ວ.
8. ເຈົ້າຂອງສະຖານທີ່ພັກເຊົາ ຫຼື ຜູ້ມາເຊົ່າສະຖານທີ່ພັກເຊົາ (ຄົນຕ່າງປະເທດ) ທີ່ບໍ່ມາແຈ້ງພັກເຊົາຊົ່ວຄາວຕໍ່ເຈົ້າໜ້າທີ່ ຈະຖືກສຶກສາອົບຮົມ, ປັບໃໝ 50-100 ໂດລາ/ຄົນ/ຄັ້ງ.
9. ຄົນຕ່າງປະເທດທີ່ໄດ້ຮັບອະນຸຍາດເຮັດວຽກຢູ່ລາວ ທີ່ມີບໍລິສັດ, ໂຄງການໃດໜຶ່ງຮັບປະກັນ ແຕ່ຕົວຈິງໄປເຄື່ອນໄຫວປະກອບອາຊີບອື່ນ ຈະຖືກປັບໃໝ 100-300 ໂດລາ/ຄົນ/ຄັ້ງ.
   - ສໍາລັບບໍລິສັດ ຈະຖືກປັບໃໝ 200-2.000 ໂດລ່າ/ຄັ້ງ.
10. ຄົນຕ່າງປະເທດ ທີ່ບໍ່ມີໃບອະນຸຍາດດໍາເນີນທຸລະກິດຢູ່ລາວ ນໍາໃຊ້ໃບອະນຸຍາດດໍາເນີນທຸລະກິດຂອງຄົນລາວ ຫຼື ຂອງຄົນຕ່າງດ້າວ ຈະຖືກປັບໃໝ 300-500 ໂດລາ/ຄັ້ງ.

- ກໍລະນີຄົນລາວ, ຄົນຕ່າງດ້າວ ໃຫ້ຄົນຕ່າງປະເທດນໍາໃຊ້ໃບອະນຸຍາດດໍາເນີນທຸລະກິດຂອງຕົນ ຈະຖືກປັບໃໝ 200-2.000 ໂດລາ/ຄັ້ງ.

11. ຄົນຕ່າງປະເທດ ທີ່ລັກລອບປະກອບອາຊີບ ຈະຖືກປັບໃໝ 100-300 ໂດລາ/ຄົນ/ຄັ້ງ.

12. ບຸກຄົນ, ນິຕິບຸກຄົນ ທີ່ຮັບເອົາຄົນຕ່າງປະເທດເຂົ້າເຮັດວຽກໂດຍບໍ່ຖືກຕ້ອງຕາມຂັ້ນຕອນ ຈະຖືກປັບໃໝ 300-500 ໂດລາ/ຄັ້ງ ແລະ ຈະຖືກສັ່ງໃຫ້ຮັບຜິດຊອບຄ່າໃຊ້-ຈ່າຍ ໃນການຈັດສົ່ງຄົນຕ່າງປະເທດ ກັບຄືນປະເທດເດີມ

13. ການຊຸກເຊື່ອງ, ໃຫ້ທີ່ພັກເຊົາ, ອໍານວຍຄວາມສະດວກໃຫ້ຄົນຕ່າງປະເທດ ລະເມີດລະບຽບກົດໝາຍຂອງ ສປປ ລາວ ຈະຖືກປັບໃໝ 200-2.000 ໂດລາ/ຄົນ/ຄັ້ງ. ຖ້າເປັນການລະເມີດໜັກ ຈະຖືກດໍາເນີນຄະດີຕາມກົດໝາຍ

14. ກໍລະນີການກັກຕົວຄົນຕ່າງປະເທດ ຕ້ອງດໍາເນີນການສືບສວນ-ສອບສວນ ອອກຄໍາສັ່ງກັກຕົວ ແລ້ວລາຍງານໃຫ້ພະແນກ ຕ.ມ ຫຼື ພະແນກຄຸ້ມຄອງຄົນຕ່າງປະເທດ ປກສ ແຂວງ ຢ່າງຊ້າບໍ່ໃຫ້ກາຍ 48 ຊົ່ວໂມງ.

15. ຄົນຕ່າງປະເທດ, ຄົນບໍ່ມີສັນຊາດ ຫຼື ພົນລະເມືອງລາວ ທີ່ລະເມີດຄໍາສັ່ງແນະນໍາສະບັບນີ້ ຍ້ອນສາຍເຫດສຸດວິໄສ ໂດຍມີຫຼັກຖານຢັ້ງຢືນຢ່າງໜັກແໜ້ນ ແມ່ນຈະໄດ້ຮັບການຍົກເວັ້ນ ຈາກການປະຕິບັດມາດຕະການຕ່າງໆ.

IV. ບາງວິທີການແກ້ໄຂກໍລະນີຕ່າງໆ.

1. ກໍລະນີຄົນຕ່າງປະເທດ ທີ່ເຂົ້າມາເຄື່ອນໄຫວທຸລະກິດ ຫຼື ມາອອກແຮງງານຢູ່ພາຍໃນແຂວງ ທີ່ມີບັດອະນຸຍາດເຮັດວຽກຢູ່ ສປປ ລາວ (WP.ID.card) ຫຼື (STP.ID.card) ແລ້ວນັ້ນ ຫາກເຮັດວຽກບໍ່ຖືກເປົ້າໝາຍທີ່ໄດ້ຮັບອະນຸຍາດ ໃຫ້ແກ້ໄຂດັ່ງນີ້:
   - ບຸກຄົນໃດຫາກຂຶ້ນກັບບໍລິສັດໃດໜຶ່ງ ແຕ່ເຮັດວຽກບໍ່ຖືກເປົ້າໝາຍ ເມື່ອກວດພົບເຫັນແລ້ວ ໃຫ້ແນະນໍາບໍລິສັດທີ່ກ່ຽວຂ້ອງນັ້ນ ມາຮັບປະກັນເອົາ ແລ້ວກັບໄປເຮັດວຽກທີ່ບໍລິສັດມອບໝາຍ, ກໍລະນີປ່ຽນບໍລິສັດ ກໍ່ຕ້ອງໄດ້ປະກອບເອກະສານ ຂໍບັດອະນຸຍາດເຮັດວຽກ (WP.ID.card) ຄືນໃໝ່ໃຫ້ຖືກຕ້ອງ.
   - ບຸກຄົນໃດມີບັດອະນຸຍາດພັກເຊົາ ແລະ ບັດອະນຸຍາດເຮັດວຽກ ແຕ່ເຮັດວຽກບໍ່ຖືກເປົ້າໝາຍ ແລະ ພາກສ່ວນກ່ຽວຂ້ອງພາຍໃນແຂວງ ໄດ້ເກັບພາສີ-ອາກອນນໍາເຂົາເຈົ້າ ແມ່ນໃຫ້ສົມທົບກັບຂະແໜງການທີ່ກ່ຽວຂ້ອງດັ່ງກ່າວນັ້ນພ້ອມກັນແກ້ໄຂ.

2. ບຸກຄົນໃດລັກແຕ່ງດອງ ຫຼື ສ້າງຄອບຄົວກັບພົນລະເມືອງລາວ ບໍ່ຖືກຕ້ອງ ຫຼື ລີ້ຊ່ອນຢູ່ລາວນັບແຕ່ 5 ປີຂຶ້ນໄປ ມີລູກນໍາກັນແລ້ວ ແລະ ມີພື້ນຖານເຮືອນຊານຖາວອນ ໃຫ້ສຶກສາອົບຮົມ, ປັບໃໝຕາມລະບຽບການ ແລ້ວແນະນໍາໃຫ້ເຂົາເຈົ້າປະກອບເອກະສານ ໃຫ້ຖືກຕ້ອງຕາມລະບຽບກົດໝາຍຂອງ ສປປ ລາວ ແລ້ວນໍາສະເໜີມາຍັງພາກສ່ວນທີ່ກ່ຽວຂ້ອງ ຄົ້ນຄວ້າພິຈາລະນາອະນຸມັດອີກເທື່ອໜຶ່ງ.

3. ສໍາລັບປະຊາຊົນບັນດາເຜົ່າຂອງປະເທດອ້ອມຂ້າງຜູ້ທີ່ດີ ເຂົ້າມາແຕ່ປີ 2005 ຄືນຫຼັງ ຫາກມີພື້ນຖານດີ, ບໍ່ມີປະຫວັດໃນການກະທໍາຜິດກົດໝາຍ, ມີພີ່ນ້ອງຮັບປະກັນ ກໍ່ສາມາດຄົ້ນຄວ້າອະນຸຍາດໃຫ້ຢູ່ລາວໄດ້ ແຕ່ຕ້ອງປະກອບເອກະສານໃຫ້ຄົບຖ້ວນ ເພື່ອນໍາສະເໜີຕໍ່ໜ້າທີ່ກ່ຽວຂ້ອງພິຈາລະນາແກ້ໄຂ; ກົງກັນຂ້າມຕໍ່ຜູ້ທີ່ບໍ່ດີ ຕ້ອງເດັດຂາດ ສົ່ງກັບຄືນ ຫຼື ພະຍາຍາມຊອກຮູ້ການເຂົ້າມາຂອງເຂົາເຈົ້າ ແລ້ວສົ່ງກັບແຕ່ຫົວທີໂລດ.

4. ຕໍ່ຄົນຕ່າງປະເທດທີ່ມາເຊົ່າເຮືອນ, ເຊົ່າຮ້ານຂາຍເຄື່ອງ, ຮ້ານບໍລິການຕ່າງໆ ເປັນຕົ້ນແມ່ນຄົນຈີນ, ຫວຽດນາມ ໃຫ້ສົມທົບກັບພາກສ່ວນກ່ຽວຂ້ອງເຊັ່ນ: ການຄ້າ, ອາກອນ, ປກສ ກວດກາຄືນຈໍານວນທີ່ມີໜ້າຕົວຈິງ ແລ້ວໃຫ້ປະຕິບັດຕາມມະຕິຕົກລົງຂອງລັດຖະບານ ເລກທີ 03/ລບ, ລົງວັນທີ 06/03/2011. ສ່ວນຈໍານວນທີ່ເຂົ້າມາລຸນຫຼັງມະຕິຕົກລົງສະບັບດັ່ງກ່າວນີ້ ແມ່ນບໍ່ອະນຸຍາດໃຫ້ຢູ່ລາວຢ່າງເດັດຂາດ.

5. ສໍາລັບຊາວຕ່າງປະເທດ ທີ່ປະກອບອາຊີບທີ່ສະຫງວນໄວ້ໃຫ້ພົນລະເມືອງລາວ ແລະ ອາຊີບທີ່ມີລັກສະນະເອກະເທດ ແມ່ນໃຫ້ປະຕິບັດຕາມ ມະຕິຕົກລົງຂອງລັດຖະບານ ເລກທີ 03/ລບ, ລົງວັນທີ 06/03/2011 ແລະ ແຈ້ງການແນະນໍາເລກທີ 2727/ຮສສ ຂອງກະຊວງແຮງງານ ແລະ ສະຫວັດດີການ-ສັງຄົມ ເຊັ່ນ: ທໍ້ວ, ຫາບ, ໃສ່ລໍ້, ລົດຈັກ, ລົດຖີບ ເລາະຂາຍເຄື່ອງ, ບໍລິການຕັດເລັບ, ເສີມສວຍ, ເກັບຊື້ເຫຼັກເສດ ຫຼື ໂລຫະຕ່າງໆ, ຂາຍຜັກ, ຊີ້ນ

ປາ, ອາຫານທະເລ ແລະ ອື່ນໆ ຢູ່ຕາມຕະຫຼາດ, ບ້ານເຮືອນປະຊາຊົນ ແມ່ນບໍ່ອະນຸຍາດໃຫ້ຂຶ້ນທະບຽນ, ບໍ່ອະນຸຍາດໃຫ້ເຮັດວຽກ ຫຼື ປະກອບອາຊີບຢ່າງເດັດຂາດ ແລະ ໃຫ້ສົມທົບກັນຈັດສົ່ງເຂົາເຈົ້າກັບຄືນປະເທດ.

V. ວິທີຈັດຕັ້ງປະຕິບັດ.

1. ບັນດາເມືອງ, ຂະແໜງການທີ່ກ່ຽວຂ້ອງພາຍໃນແຂວງ ໃຫ້ປະສານສົມທົບກັນ ເພື່ອພ້ອມກັນແກ້ໄຂບັນຫາຄົນຕ່າງປະເທດ ບົນພື້ນຖານຕ້ອງກຳແໜ້ນແນວທາງນະໂຍບາຍຂອງພັກ ກໍ່ຄືມະຕິຄຳສັ່ງຂອງຂັ້ນເທິງວາງອອກຢ່າງເຂັ້ມງວດ.
2. ໃນການແກ້ໄຂບັນຫາຄົນຕ່າງປະເທດ ກໍ່ຄືການປະຕິບັດວິຊາສະເພາະຂອງຕົນ ແຕ່ລະໄລຍະຕ້ອງມີການລາຍງານມາຍັງຂັ້ນເທິງຂອງຕົນ ຢ່າງເປັນປົກກະຕິ ແລະ ປະເມີນໄດ້ເຖິງຄວາມຮັບຜິດຊອບຂອງຕົນ ທີ່ສາມາດແກ້ໄຂໄດ້ຈັກເປີເຊັນ? ເຊິ່ງເອີ້ນວ່າ ເປັນຂໍ້ມູນຊັດເຈນ ເປັນຕົ້ນແມ່ນ: ຈຳນວນຄົນຕ່າງປະເທດທີ່ອາໃສຢູ່ແຂວງບໍລິຄຳໄຊ ມີຈຳນວນເທົ່າໃດ?, ມີຈັກສັນຊາດ?, ສາມາດໄຈ້ແຍກແກ້ໄຂເປັນແຕ່ລະກໍລະນີ ແລະ ປະເພດຂອງຄົນຕ່າງປະເທດທີ່ເຂົ້າມານັ້ນ ຄືແນວໃດ?.
3. ປັບປຸງຄືນຂອດປະສານສົມທົບ ລະຫວ່າງຂະແໜງການທີ່ກ່ຽວຂ້ອງ ແຕ່ແຂວງລົງຮອດທ້ອງຖິ່ນ ໃຫ້ເປັນເອກະພາບກັນ ແລະ ເປັນເຈົ້າການຮ່ວມກັນແກ້ໄຂບັນຫາຄົນຕ່າງປະເທດ ທີ່ມີສະພາບຫຍໍ້ທໍ້ໃນສັງຄົມ, ຫຼີກລ່ຽງຂອດເອື່ອຍອີງ ແລະ ໂຍນຄວາມຮັບຜິດຊອບໃຫ້ກັນ ແລະ ກັນ ຄືໄລຍະຜ່ານມາ.
4. ຄຳສັ່ງແນະນຳສະບັບນີ້ ປ່ຽນແທນ ຄຳສັ່ງແນະນຳສະບັບເລກທີ 0022/ຂບຊ, ລົງວັນທີ 22/12/2008 ແລະ ມີຜົນສັກສິດນັບແຕ່ມື້ລົງລາຍເຊັນເປັນຕົ້ນໄປ.

**ເຈົ້າແຂວງ-ແຂວງບໍລິຄຳໄຊ.**

ແຂວງ ບໍລິຄຳໄຊ

ເຈົ້າແຂວງ

ປານ ນ້ອຍມະນີ

Pan NOYMANY